# ການນຳຂັ້ນສູງຂອງພັກ-ລັດ
# ຕີລາຄາສູງຕໍ່ການເຄື່ອນໄຫວຂອງທະນາຄານໃນຮອບປີຜ່ານມາ



ເນື່ອງໃນໂອກາດສົ່ງທ້າຍປີເກົ່າ-ຕ້ອນຮັບປີໃໝ່ ຄ.ສ 2012, ຄະນະນຳທະນາຄານແຫ່ງ ສປປ ລາວ ເຊິ່ງນຳໂດຍທ່ານ ສົມພາວ ໄຟສິດ ຜູ້ວ່າການທະນາຄານແຫ່ງ ສປປ ລາວ ພ້ອມຄະນະໄດ້ເຂົ້າອວຍພອນ ບັນດາທ່ານຜູ້ນຳຂັ້ນສູງຂອງພັກ ແລະ ລັດຖະບານ ໂດຍສະເພາະໃນຕອນແລງຂອງວັນທີ 23 ທັນວາ ຄະນະດັ່ງກ່າວກໍໄດ້ນຳເອົາກະຕ່າດອກໄມ້ສົດເຂົ້າອວຍພອນ ແລະ ສະແດງຄວາມຮູ້ບຸນຄຸນຕໍ່ທ່ານນາຍົກລັດຖະມົນຕີ ທອງສິງ ທຳມະວົງ ທີ່ສຳນັກງານນາຍົກລັດຖະມົນຕີ.

ໃນໂອກາດດັ່ງກ່າວ ທ່ານ ສົມພາວ ໄຟສິດ ຜູ້ວ່າການທະນາຄານແຫ່ງ ສປປ ລາວ ກໍໄດ້ແຈ້ງສະພາບການເຄື່ອນໄຫວໃນຮອບປີຜ່ານມາຂອງທະນາຄານແຫ່ງ ສປປ ລາວ ໃຫ້ທ່ານນາຍົກຊາບ, ໂດຍສະເພາະໃນໜຶ່ງປີຜ່ານມາ ທະນາຄານແຫ່ງ ສປປ ລາວ ໄດ້ສືບຕໍ່ຈັດຕັ້ງປະຕິບັດໜ້າທີ່ໃນການເປັນເສນາທິການໃຫ້ລັດຖະບານໃນດ້ານມະຫາພາກເງິນຕາ-ສິນເຊື່ອ ເຊິ່ງສາມາດຍາດໄດ້ຜົນງານອັນພົ້ນເດັ່ນໃນຫຼາຍດ້ານ. ຈາກນັ້ນທ່ານ ນາຍົກ ທອງສິງ ທຳມະວົງ ກໍໄດ້ຊົມເຊີຍຕໍ່ຄວາມພະຍາຍາມຂອງບັນດາການນຳແລະພະນັກ

ງານທຸກຖ້ວນໜ້າທີ່ສາມາດຍາດໄດ້ໝາກຜົນສຳເລັດໃນການເຄື່ອນໄຫວຈັດຕັ້ງປະຕິບັດໜ້າທີ່ໃນໜຶ່ງປີຜ່ານມາ ໂດຍສະເພາະທ່ານໄດ້ຊີ້ນຳບັນຫາສຳຄັນຈຳນວນໜຶ່ງທີ່ຄະນະພັກ-ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ຈະຕ້ອງພ້ອມກັນຈັດຕັ້ງຜັນຂະຫຍາຍໃຫ້ອອກດອກແຕກຜົນຍິ່ງໆຂຶ້ນ.

ໃນເວລາຕໍ່ມາຄະນະຂອງທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ ກໍໄດ້ເຂົ້າອວຍພອນແດ່ທ່ານ ພັນໂທ ດວງໃຈ ພິຈິດ ກຳມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການ ກະຊວງປ້ອງກັນປະເທດ ເຊິ່ງຄະນະດັ່ງກ່າວກໍໄດ້ຮັບການຕ້ອນຮັບຢ່າງອົບອຸ່ນ ແລະ ໄດ້ຮັບການຊີ້ນຳຈາກ ທ່ານຮອງນາຍົກກ່ຽວກັບການເຄື່ອນໄຫວຂອງວຽກງານທະນາຄານໃນຕໍ່ໜ້າ.